# ເອກະສານຊ້ອນທ້າຍສຳລັບຄູ່ມືການປ້ອງກັນ ແລະ ຄວບຄຸມການລະບາດພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19 ໃນໂຮງຮຽນ

## ເອກະສານຊ້ອນທ້າຍ C: ການສະໜັບສະໜູນສຸຂະພາບຈິດ ແລະ ຈິດຕະວິທະຍາທາງດ້ານສັງຄົມ (MHPSS)

**ຂໍ້ຄວາມສຳຄັນກ່ຽວກັບ MHPSS** (ສ່ວນໃຫຍ່ແມ່ນຖືກດັດແປງມາຈາກ ບົດສະຫລຸບຫຍໍ້ ຂອງ IASC ທີ່ກ່ຽວກັບ MHPSS)

ໂຮງຮຽນມັກນຳໃຊ້ເປັນພື້ນທີ່ບໍລິການແບບປະສົມປະສານ ທີ່ສະໜັບສະໜູນຄວາມພະຍາຍາມຂອງຫຼາຍຂະແໜງການ ເຊິ່ງສຳຄັນທີ່ສຸດຕໍ່ການຮັບມືກັບ COVID-19. ໃນຂະນະທີ່ ການປະຕິບັດກ່ຽວກັບ MHPSS ຖືກນຳໃຊ້ໃນການບໍລິການດ້ານສຸຂະພາບ ແລະ ການປົກປ້ອງເດັກທົ່ວໄປ, ໂຮງຮຽນ ແລະ ໂຄງສ້າງການຈັດຕັ້ງຊຸມຊົນອື່ນໆກໍ່ໃຫ້ການສະໜັບສະໜູນ ທີ່ສຳຄັນຕໍ່ຊຸມຊົນຂອງໂຮງຮຽນ ລວມໄປເຖິງຜູ້ທີ່ມີໜ້າທີ່ໃຫ້ການປົກປ້ອງເດັກຕ່າງໆ. ນອກຈາກນີ້, ໂຮງຮຽນຍັງສາມາດແກ້ໄຂບັນຫາການດູຖູກ ແລະ ການຈຳແນກໃນສັງຄົມ ແລະ ສະໜັບສະໜູນເດັກນ້ອຍ ແລະ ຄອບຄົວ ທີ່ອາດຈະໄດ້ຮັບຜົນກະທົບທາງຈິດຕະວິທະຍາທາງລົບ ເນື່ອງຈາກບັນຫາຕ່າງໆເຊັ່ນ: ການສູນເສຍການຮຽນ, ຄວາມຢ້ານກົວ, ຄວາມກັງວົນໃຈ ຫຼື ການຖືກແຍກຈາກສະມາຊິກໃນຄອບຄົວ.

ຜູ້ນຳໂຮງຮຽນ ລວມທັງຄູອາຈານຜູ້ມີບົດບາດສຳຄັນໃນການສະໜັບສະໜູນກິດຈະກຳຂອງຊຸມຊົນ ທີ່ກ່ຽວກັບ MHPSS ເຊັ່ນ: ການແລກປ່ຽນຂໍ້ຄວາມທີ່ສຳຄັນ ທີ່ເປັນຄວາມຈິງ ກັບນັກຮຽນ ແລະ ຄອບຄົວຂອງພວກເຂົາ, ຮັກສາການຕິດຕໍ່ສື່ສານກັບນັກຮຽນຜູ້ທີ່ອາດຈະຖືກແຍກໂຕອອກຈາກຄົນອື່ນ ຜ່ານທາງໂທລະສັບ, ຂໍ້ຄວາມໂຕອັກສອນ, ຫຼື ຊ່ອງທາງອອນລາຍອື່ນໆ ແລະ ໃຫ້ການດູແລ ແລະ ຊ່ວຍເຫຼືອປະຊາຊົນ ຜູ້ທີ່ຖືກແຍກອອກຈາກຄອບຄົວ ແລະ ຜູ້ເບິ່ງແຍງດູແລຂອງພວກເຂົາ.

**ຂໍ້ຄວນພິຈາລະນາທີ່ສຳຄັນ**

- ສ້າງການຕອບໂຕ້ກ່ຽວກັບ MHPSS ໃນຫົວຂໍ້ດັ່ງກ່າວ. ບັນຫາຕ່າງໆໃນໂຮງຮຽນ/ຊຸມຊົນ ທີ່ມີຢູ່ແລ້ວ ແລະ ກຳລັງເກີດຂຶ້ນຢູ່ ບໍ່ສາມາດແຍກອອກຈາກກັນໄດ້ຈາກການຕອບໂຕ້ກ່ຽວກັບ MHPSS ສຳລັບ COVID-19.
- ເຮັດວຽກຮ່ວມກັບຊຸມຊົນ ເພື່ອທີ່ຈະລະບຸ ແລະ ເຂົ້າເຖິງເດັກນ້ອຍ ຜູ້ທີ່ອາດຈະຖືກກີດກັນຈາກເຄືອຂ່າຍສັງຄົມ ເຊັ່ນວ່າ ຜູ້ທີ່ມີຄວາມພິການ, ຜູ້ລີ້ໄພ, ຜູ້ອົບພະຍົບ ແລະ ຊົນເຜົ່າສ່ວນນ້ອຍຕ່າງໆ.
- ເຮັດໃຫ້ການບໍລິການກ່ຽວກັບ MHPSS ສາມາດເຂົ້າເຖິງໄດ້ ແລະ ດັດໃຊ້ຢ່າງເໝາະສົມກັບຄວາມຕ້ອງການສະເພາະຂອງເດັກນ້ອຍ, ຜູ້ທີ່ໃຫ້ບໍລິການກ່ຽວກັບ MHPSS ຈະຕ້ອງຄຳນຶງສະເໜີ ເຖິງຄວາມສ່ຽງ ແລະ ປະສົບການຕ່າງໆ ທີ່ເດັກຍິງ-ຊາຍ ແລະ ເດັກນ້ອຍທີ່ມີບັນຫາທາງການແພດມາກ່ອນ.
- ໃຫ້ໝັ້ນໃຈວ່າມີການລວມເອົາທຸກກຸ່ມຄົນ. ກຸ່ມປະຊາກອນບາງຈຳນວນ ອາດຈະພົບກັບອຸປະສັກຕ່າງໆໃນການເຂົ້າເຖິງຂໍ້ມູນ, ການດູແລ ແລະ ການສະໜັບສະໜູນຕ່າງໆ ຖ້າຫາກບໍ່ມີການສະໜອງສິ່ງດັ່ງກ່າວໃນຈຳນວນຫຼາຍ ແລະ ໃນເງື່ອນໄຂທີ່ສາມາດເຂົ້າເຖິງໄດ້ ແລະ ຜ່ານຫຼາຍຊ່ອງທາງ.
    - ໃສ່ຂໍ້ມູນທີ່ອ່ານງ່າຍ ສຳລັບຜູ້ທີ່ມີລະດັບການສຶກສາຕໍ່າ, ສຳລັບຄົນຕາບອດ, ພິມໂຕໃຫຍ່, ມີພາສາມື, ມີວິດີໂອພ້ອມຄຳບັນຍາຍຂອງວິດີໂອ ແລະ ເປັນເນື້ອຫາທີ່ເຂົ້າເຖິງໄດ້ໃນເວບໄຊທ໌
    - ສຳລັບກຸ່ມຂະໜາດນ້ອຍທີ່ມີພາສາ ແລະ ສັງຄົມທີ່ແຕກຕ່າງ, ການໃຫ້ຂໍ້ມູນຄວນມີການເຜີຍແຜ່ໂດຍໃຊ້ພາສາທີ່ກ່ຽວຂ້ອງ
- ຮັບປະກັນວ່າກົນໄກການຮຽນທາງໄກ ຈະບໍ່ສົ່ງຜົນໃຫ້ເດັກນ້ອຍພົບກັບບັນຫາຄວາມຮຸນແຮງ ເປັນຕົ້ນວ່າ ການຂົ່ມເຫັງໃນໂລກອິນເຕີເນັດ. ໃຫ້ໄຕ່ຕອງເວລາທີ່ອາດຈະຕ້ອງມີຜູ້ດູແລ ຫຼື ຜູ້ເບິ່ງແຍງທີ່ເປັນຜູ້ໃຫຍ່ເບິ່ງນຳ (ຕົວຢ່າງ ກໍລະນີທີ່ຄູມີຊົ່ວໂມງສອນແບບຄົນຕໍ່ຄົນກັບນັກຮຽນ)
- ຝຶກອົບຮົມ ແລະ ສະໜັບສະໜູນຜູ້ທີ່ໃຫ້ການບໍລິການກ່ຽວກັບ MHPSS ແກ່ເດັກໃນໂຮງຮຽນ ແລະ ໂຄງສ້າງຈັດຕັ້ງຊຸມຊົນອື່ນໆ ກ່ຽວກັບພື້ນຖານຂອງການປ້ອງກັນຕົນເອງຈາກຄວາມຮຸນແຮງຕໍ່ບົດບາດຍິງຊາຍ (GBV), ການປ້ອງກັນຕົນເອງຈາກການຂູດຮີດ ແລະ ການລ່ວງລະເມີດທາງເພດ (PSEA), ການລາຍງານ ແລະ ການສົ່ງຕໍ່ (ເບິ່ງທີ່ຂໍ້ຄວາມດ້ານລຸ່ມ ກ່ຽວກັບການປ້ອງກັນຕົນເອງຈາກຄວາມຮຸນແຮງທາງເພດ ໃນຊ່ວງຂອງ Covid-19).
- ແກ້ໄຂບັນຫາດ້ານສຸຂະພາບຈິດ ແລະ ຊີວິດການເປັນຢູ່ຂອງຄູອາຈານ ແລະ ພະນັກງານໃນຂະແໜງການສຶກສາຄົນອື່ນໆ.
    - ກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ ສຳລັບຄູອາຈານ ອາດເປັນການສະໜັບສະໜູນທາງສັງຄົມອີກທາງໜຶ່ງ ໃນຊ່ວງເວລາການຕອບໂຕ້ກັບ Covid-19 ໃນຂະນະທີ່ມີການແລກປ່ຽນຂໍ້ມູນດ້ານການດູແລພະນັກງານ

## ເອກະສານຊ້ອນທ້າຍສຳລັບຄູ່ມືການປ້ອງກັນ ແລະ ຄວບຄຸມການລະບາດພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19 ໃນໂຮງຮຽນ

- ສ້າງແຜນອາດຂອງຜູ້ຊ່ຽວຊານ ແລະ ໂຄງສ້າງຕ່າງໆດ້ານ MHPSS ທີ່ມີຢູ່ ລວມໄປເຖິງການບໍລິການຕ່າງໆດ້ານການສຶກສາຂອງລັດ ແລະ ເອກະຊົນ ໃຫ້ກາຍເປັນກົນໄກຂອງແຫຼ່ງລວບລວມ, ສົບຊ້ອນ ແລະ ປະສານງານ (ເປັນຕົ້ນແມ່ນ ຜູ້ໃຫ້ຄຳປຶກສາໂຮງຮຽນ ແລະ ພະຍາບານ, ພະນັກງານພະແນກສາທາລະນະສຸກທ້ອງຖິ່ນ, ແລະ ອື່ນໆ).
- ທົບທວນ ແລະ ສ້າງລະບົບການສົ່ງຕໍ່ທີ່ແຂງແຮງ ໂດຍສະເພາະແມ່ນກໍລະນີຂອງຜູ້ປ່ວຍຂັ້ນຮ້າຍແຮງ.
    - ຮັບປະກັນວ່າຜູ້ສະໜອງການບໍລິການມີຄວາມເຂົ້າໃຈກ່ຽວກັບການບໍລິການດູແລຮັກສາອື່ນໆ ລວມໄປເຖິງການສົ່ງຕໍ່ ແລະ ການບໍລິການສຳລັບຜູ້ປ່ວຍກ່ຽວກັບ ຄວາມຮຸນແຮງຕໍ່ບົດບາດຍິງຊາຍ ແລະ ການປ້ອງກັນຕົນເອງຈາກການຂູດຮີດ ແລະ ການລ່ວງລະເມີດທາງເພດ.
- ແບ່ງປັນຂໍ້ຄວາມກ່ຽວກັບສຸຂະພາບຈິດໃນທາງບວກ ແລະ ລວມເອົາຂໍ້ຄວາມການດູແລຮັກສາອື່ນໆ ໃຫ້ເປັນເປັນສ່ວນໜຶ່ງຂອງການໂຄສະນາເຜີຍແຜ່ຄວາມຮູ້ທົ່ວໄປຂອງມວນຊົນ ເພື່ອຕ້ານກັບການດູຖູກ, ແກ້ໄຂຄວາມຢ້ານກົວຂອງການແຜ່ລະບາດ ແລະ ຊຸກຍູ້ໃຫ້ປະຊາຊົນເຫັນຄຸນຄ່າແລະສະໜັບສະໜູນພະນັກງານແຖວໜ້າ.
    - ເຮັດວຽກຮ່ວມກັບຜູ້ທີ່ເຮັດວຽກກ່ຽວກັບການປົກປ້ອງເດັກນ້ອຍ, ສຸຂະພາບ ແລະ ການສື່ສານເພື່ອການພັດທະນາ
- ໂຮງຮຽນຕ່າງໆສາມາດພິຈາລະນາສົ່ງເສີມກິດຈະກຳຕ່າງໆ ທີ່ກ່ຽວກັບ MHPSS ເຊິ່ງເປັນສ່ວນໜຶ່ງຂອງວິທີການລວມທາງດ້ານສັງຄົມ ດັ່ງລຸ່ມນີ້:
    - ການສົ່ງເສີມຍຸດທະສາດການເບິ່ງແຍງຕົນເອງ ເຊັ່ນ: ການຝຶກຫາຍໃຈ ຫຼື ຮູບແບບອື່ນໆທີ່ຊ່ວຍໃຫ້ຜ່ອນຄາຍ ທີ່ກ່ຽວຂ້ອງກັບວັດທະນະທຳ
    - ການສົ່ງຂໍ້ຄວາມຕ່າງໆ ທີ່ຊ່ວຍໃຫ້ທຸກຢ່າງກັບມາເປັນປົກກະຕິ ເຖິງບັນຫາຄວາມຢ້ານກົວ ແລະ ວິຕົກກັງວົນ ແລະ ວິທີຕ່າງໆ ທີ່ຄົນທົ່ວໄປສາມາດໃຊ້ເພື່ອສະໜັບສະໜູນຄົນອື່ນໆ
    - ສື່ຂໍ້ມູນກ່ຽວກັບ COVID-19 ໃຫ້ຈະແຈ້ງ, ແໜ່ນຢຳ ແລະ ຖືກຕ້ອງ.

### ການຊ່ວຍເຫຼືອເດັກນ້ອຍຮັບມືກັບຄວາມກົດດັນໃນໄລຍະການແຜ່ລະບາດຂອງ COVID-19

- ຄູອາຈານ ແລະ ຜູ້ໃຫ້ການເບິ່ງແຍງດູແລ ຄວນເຂົ້າຮ່ວມການຟັງຢ່າງຕັ້ງໜ້າ ແລະ ປູກຝັງທັດສະນະຄະຕິຄວາມເຂົ້າໃຈກັບເດັກນ້ອຍ.
- ຮ່ວມມືກັບຜູ້ທີ່ເຮັດວຽກກ່ຽວກັບການປົກປ້ອງເດັກນ້ອຍ ເພື່ອໃຫ້ຂໍ້ມູນກ່ຽວກັບບົດບາດຍິງຊາຍ ແລະ ຄວາມຮັບຮູ້ສະເພາະກຸ່ມອາຍຸ ໃຫ້ແກ່ເດັກນ້ອຍກ່ຽວກັບການໃຫ້ບໍລິການດູແລຮັກສາທີ່ມີຢູ່ ລວມໄປເຖິງ GBV/PSEA ແລະ ກະຕຸກຊຸກຍູ້ພວກເຂົາໃຫ້ບອກຄວາມຕ້ອງການຂອງພວກເຂົາ ແລະ ສັນຫາຄວາມຊ່ວຍເຫຼືອ ໃນຮູບແບບທີ່ປອດໄພ ແລະ ມີຈະລິຍະທຳ.
- ທົບທວນ 6 ວິທີຂອງອົງການ UNICEF ທີ່ຜູ້ປົກຄອງສາມາດສະໜັບສະໜູນລູກຂອງເຂົາເຈົ້າ ໃນຊ່ວງການແຜ່ລະບາດຂອງ COVID-19 , ຄຳແນະນຳຂອງນັກຈິດຕະວິທະຍາກ່ຽວກັບວິທີການຊ່ວຍເຫຼືອລູກຂອງທ່ານ ເພື່ອຮັບມືກັບອາລົມຕ່າງໆທີ່ພວກເຂົາອາດຈະກຳລັງມີຢູ່ໃນປະຈຸບັນ.
- ທົບທວນ 8 ເທັກນິກຂອງ UNICEF ທີ່ຈະຊ່ວຍປອບໂຍນ ແລະ ປ້ອງກັນລູກຂອງທ່ານ ວິທີບອກລູກຂອງທ່ານກ່ຽວກັບພະຍາດ coronavirus 2019 (COVID-19)

### ແຫຼ່ງຂໍ້ມູນ

ບົດສະຫຼຸບຫຍໍ້ຂອງ IASC ກ່ຽວກັບການແກ້ໄຂບັນຫາສຸຂະພາບຈິດ ແລະ ທາງດ້ານຈິດຕະວິທະຍາ ໃນຊ່ວງການແຜ່ລະບາດຂອງ COVD-19:
https://interagencystandingcommittee.org/iasc-reference-group-mental-health-andpsychosocial-support-emergency-settings/briefing-note-about

## ເອກະສານຊ້ອນທ້າຍສໍາລັບຄູ່ມືການປ້ອງກັນ ແລະ ຄວບຄຸມການລະບາດພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19 ໃນໂຮງຮຽນ

ຄໍາແນະນໍາ INEE ກ່ຽວກັບການສະໜັບສະໜູນທາງດ້ານຈິດຕະວິທະຍາ:
https://inee.org/system/files/resources/INEE_Guidance_Note_on_Psychosocial_Support_ENG_v2.pdf

SAMHSA ສົນທະນາກັບເດັກນ້ອຍ: ເທັກນິກສໍາລັບຜູ້ເບິ່ງແຍງຄົນເຈັບ, ຜູ້ປົກຄອງ ແລະ ຄູອາຈານ ໃນຊ່ວງການແຜ່ລະບາດຂອງເຊື້ອໂຣກ:
https://store.samhsa.gov/system/files/pep20-01-01-006_508_0.pdf
ແນວທາງປະຕິບັດ: ການປົກປ້ອງເດັກນ້ອຍລະການແຜ່ລະບາດຂອງເຊື້ອໂຣກ:
https://alliancecpha.org/en/child-protection-online-library/guidance-note-protection-childrenduring-infectious-disease